Media Release

Cambodia • Lao PDR • Thailand • Viet Nam
For sustainable development

สามาดออกข่าวได้ทันที

# ບົດລາຍງານສະບັບໃໝ່ ໄດ້ເນັ້ນໜັກໃຫ້ເຫັນເຖິງ ຜົນກະທົບຈາກ ການບຸກລຸກຂອງມະນຸດ ແລະ ສິ່ງແວດລ້ອມ ໃນອ່າງແມ່ນ້ຳຂອງຕອນລຸ່ມ

**ທີ່ນະຄອນຫຼວງວຽງຈັນ, ສປປ ລາວ, ວັນທີ 19 ຕຸລາ 2021** — ຄະນະກຳມາທິການແມ່ນ້ຳຂອງສາກົນ (ຄມສ) ໄດ້ ອອກ ບົດລາຍງານ 2 ສະບັບ ໃນມື້ນີ້ ເຊິ່ງໃຫ້ຮູ້ວ່າ ການຫາປາ ຍັງຄົງເປັນແຫຼ່ງຫາລ້ຽງຊີບ ທີ່ສຳຄັນ ຂອງປະຊາຊົນ ໃນ ປະເທດກຳປູເຈຍ, ສປປ ລາວ, ປະເທດໄທ ແລະ ປະເທດຫວຽດນາມ. ແຕ່ວ່າ ການຫາປາຫຼາຍເກີນໄປ ພ້ອມກັນກັບ ການ ເຊື່ອມໂຊມຂອງແຫຼ່ງທີ່ຢູ່ອາໄສຂອງປາ ອັນເນື່ອງມາຈາກການຂະຫຍາຍຕົວຂອງປະຊາກອນຢ່າງໄວວາ, ການພັດທະນາ ໂຄງລ່າງພື້ນຖານ ແລະ ການປ່ຽນແປງຂອງສະພາບດິນຟ້າອາກາດນັ້ນ ກຳລັງສ້າງຄວາມກົດດັນໃຫ້ ການປະມົງຫາປາ ໃນ ອ່າງແມ່ນ້ຳຂອງຕອນລຸ່ມ. ໃນເວລາດຽວກັນນັ້ນ, ການປ່ຽນແປງຂອງ ລະບົບນິເວດທາງນ້ຳ ໃນອ່າງແມ່ນ້ຳຂອງແຫ່ງນີ້ ກໍ່ ກຳລັງສົ່ງຜົນກະທົບກັບ ສະພາບການທາງສັງຄົມ.

ບົດລາຍງານ 2 ສະບັບນີ້ ມີຊື່ວ່າ “Status and Trends of Fish Abundance and Diversity in the Lower Mekong Basin during 2007–2018” ຫຼື ແປເປັນພາສາລາວວ່າ “ສະຖານະພາບ ແລະ ທ່າອ່ຽງຂອງ ຄວາມ ອຸດົມສົມບູນ ແລະ ຄວາມຫຼາກຫຼາຍຂອງປາ ໃນອ່າງແມ່ນ້ຳຂອງຕອນລຸ່ມ ໃນລະຫວ່າງປີ 2007 - 2018” (ບົດລາຍ ງານ FADM) ແລະ “Social Impact Monitoring and Vulnerability Assessment 2018” ຫຼື ແປເປັນ ພາສາລາວວ່າ “ການຕິດຕາມຜົນກະທົບດ້ານສິ່ງແວດລ້ອມ ແລະ ການປະເມີນຄວາມສ່ຽງ ໃນປີ 2018” (ບົດລາຍງານ SIMVA) ເຊິ່ງໄດ້ຄົ້ນພົບວ່າ ບັນດາຄົວເຮືອນຕ່າງໆ ຍັງສືບຕໍ່ເພິ່ງພາແຫຼ່ງຊັບພະຍາກອນນ້ຳ ທີ່ກຳລັງຕົກຢູ່ພາຍໃຕ້ຄວາມ ກົດດັນເພີ່ມຂຶ້ນເລື້ອຍໆ.

“ບົດລາຍງານດັ່ງກ່າວນີ້ ຍັງໄດ້ເນັ້ນໜັກເຖິງ ຄວາມສຳຄັນຂອງການພັດທະນາຢ່າງມີຄວາມຮັບຜິດຊອບ, ການຮັກສາສົມ ດຸນ ລະຫວ່າງ ຜົນປະໂຫຍດ ລະດັບພາກພື້ນ ແລະ ລະດັບປະເທດ ແລະ ການຮ່ວມມືລະດັບພາກພື້ນທີ່ໜັກແໜ້ນຂຶ້ນກວ່າ ເພື່ອປົກປ້ອງແມ່ນ້ຳຂອງ ແລະ ຊັບພະຍາກອນທີ່ກ່ຽວຂ້ອງ,” ກ່າວໂດຍ ທ່ານ ດຣ. ອັນ ພິສ ຣັດດາ, ຫົວໜ້າກອງເລຂາ ຄມສ.

ບົດລາຍງານທັງສອງສະບັບນີ້ ໄດ້ແນະນຳໃຫ້ປົກປ້ອງ ປະຊາກອນປາ ເພື່ອຮັບປະກັນດ້ານ ການສະໜອງອາຫານໃຫ້ ປະຊາຊົນຫຼາຍລ້ານຄົນ ທີ່ອາໄສຢູ່ໃນອ່າງແມ່ນ້ຳຂອງຕອນລຸ່ມ ແລະ ເພື່ອປົກປ້ອງບໍ່ໃຫ້ ລາຍຮັບຂອງຄົວເຮືອນ ຫຼຸດລົງ ຕື່ມອີກ. ໂດຍອີງຕາມບົດລາຍງານ SIMVA ໃນປີ 2018 ນັ້ນ, 35% ຂອງຈຳນວນ 2.800 ຄົວເຮືອນ ທີ່ໄດ້ດຳເນີນ ການສຳຫຼວດນັ້ນ ໄດ້ເວົ້າວ່າ ລາຍຮັບຂອງພວກເຂົາ ຫຼຸດລົງ, 32% ເວົ້າວ່າ ຍັງຄືເກົ່າ ແລະ ມີພຽງແຕ່ 26% ທີ່ເວົ້າວ່າ ລາຍຮັບຂອງພວກເຂົາ ເພີ່ມຂຶ້ນໜ້ອຍໜຶ່ງ, ສ່ວນວ່າ 6% ໄດ້ໃຫ້ຮູ້ວ່າ ລາຍຮັບຂອງພວກເຂົາ ເພີ່ມຂຶ້ນຫຼາຍ ເມື່ອທຽບ ກັບ ປີ 2013..

ການປ່ຽນແປງຢ່າງຮຸນແຮງ ທາງດ້ານ ແຫຼ່ງຊັບພະຍາກອນນ້ຳ ເຊິ່ງຮວມທັງ ດ້ານກະສິກຳ, ການລ້ຽງສັດນ້ຳ, ປາ, ສັດ ແລະ ພືດໃນນ້ຳອື່ນໆ ແມ່ນກຳລັງສົ່ງຜົນກະທົບຕໍ່ ລາຍຮັບຂອງຄົວເຮືອນ, ເຊິ່ງຄົວເຮືອນ ປະມານ 22% ໄດ້ລາຍງານໃຫ້ ຮູ້ວ່າ ພວກເຂົາໄດ້ຮັບຜົນກະທົບ ຈາກບັນຫາດັ່ງກ່າວນີ້.

ແຕ່ວ່າ ການຫາລ້ຽງຊີບໃນຮູບແບບອື່ນໆ ທີ່ບໍ່ກ່ຽວຂ້ອງກັບ ແຫຼ່ງຊັບພະຍາກອນນໍ້າ ເຊິ່ງຮວມທັງ ການຈ້າງແຮງງານທີ່ມີລາຍຮັບດີ, ການເຮັດທຸລະກິດ ຫຼື ການຄ້າຂາຍນັ້ນ ກໍ່ມີບົດບາດສຳຄັນເພີ່ມຂຶ້ນເລື້ອຍໆ ແລະ ອາດຈະຫຼຸດຜ່ອນຄວາມສ່ຽງໄພ ທີ່ເກີດຈາກການປ່ຽນແປງໃນແຫຼ່ງຊັບພະຍາກອນແມ່ນໍ້າຂອງ. ບົດລາຍງານສອງສະບັບນີ້ ໄດ້ເຕືອນໃຫ້ຮູ້ວ່າ ຍັງມີຊ່ອງເຂດວຽກງານຫຼາຍດ້ານ ທີ່ຕ້ອງປັບປຸງ ເຊິ່ງມີຜົນສະທ້ອນດ້ານນະໂຍບາຍ ຕໍ່ກັບລັດຖະບານປະເທດຕ່າງໆ ຖ້າວ່າຕ້ອງການປົກປ້ອງຊຸມຊົນຈາກ ຄວາມສ່ຽງທີ່ກ່ຽວຂ້ອງກັບ ນໍ້າ ແລະ ສະພາບອາກາດ.

ບົດລາຍງານ FADM ທີ່ມີ 138 ໜ້ານັ້ນ ແມ່ນເປັນບົດສຶກສາຂະໜາດໃຫຍ່ ຄັ້ງທຳອິດທີ່ເຄີຍມີມາ ທີ່ສຶກສາການປ່ຽນແປງທາງດ້ານພື້ນທີ່ ແລະ ການປ່ຽນແປງທາງດ້ານເວລາຂອງ ຄວາມອຸດົມສົມບູນ ແລະ ຄວາມຫຼາກຫຼາຍຂອງປາໃນອ່າງແມ່ນໍ້າຂອງຕອນລຸ່ມ ໂດຍນຳໃຊ້ ຂໍ້ມູນຕິດຕາມການປະມົງໄລຍະຍາວຂອງ ຄມສ. ການສຶກສາໃນຄັ້ງນີ້ ໄດ້ພິສູດໃຫ້ເຫັນວ່າ ຊຸມຊົນຊາວປະມົງ ໃນເກືອບທຸກເຂດ ໃນອ່າງແມ່ນໍ້າຂອງຕອນລຸ່ມ ໄດ້ຮັບຜົນກະທົບ. ອັດຕາການຈັບຫາປາຕາມສະຖານີທີ່ໄດ້ທຳການສຳຫຼວດມານັ້ນໄດ້ຫຼຸດລົງກໍຄື ສອງໃນສີ່ ສະຖານີ ໃນ ສປປ ລາວ ແລະ ສາມໃນຫ້າ ສະຖານນີຢູ່ຫວຽດນາມ.

ສ່ວນໜຶ່ງຂອງຄຳແນະນຳແບບກວມລວມນັ້ນ, ບົດສຶກສາໃນຄັ້ງນີ້ ໄດ້ຮຽກຮ້ອງ ບັນດາລັດຖະບານ 4 ປະເທດສະມາຊິກ ຄມສ ໃຫ້ບັງຄັບໃຊ້ ບັນດາກົດໝາຍແຫ່ງຊາດ ວ່າດ້ວຍການປະມົງ ແລະ ຮ່ວມກັນຈັດຕັ້ງປະຕິບັດ ຍຸດທະສາດຄຸ້ມຄອງ ແລະ ພັດທະນາ ການປະມົງ ທົ່ວທັງອ່າງແມ່ນໍ້າຂອງ (Mekong Basin-wide Fisheries Management and Development Strategy) ເພື່ອຟື້ນຟູ ຊຸມຊົນຊາວປະມົງທຸກຍາກ. ນອກຈາກນີ້ ຍັງໄດ້ສະເໜີໃຫ້ ເຊື່ອມສານເອົາບັນດາແຜນຄຸ້ມຄອງແມ່ນໍ້າຕ່າງໆ ເພື່ອແກ້ໄຂຄວາມສ່ຽງຈາກ ການພັດທະນາເຂື່ອນໄຟຟ້າ ທີ່ກຳລັງເພີ່ມຂຶ້ນ.

ການຕິດຕາມຂໍ້ມູນຂອງບົດລາຍງານສະບັບນີ້ ໄດ້ປະຕິບັດທຸກໆວັນ ໃນລະຫວ່າງປີ 2007 ເຖິງປີ 2018 ໂດຍບັນດາຊາວປະມົງມືອາຊີບ ຢູ່ 38 ສະຖານນີ ລຽບຕາມລຳແມ່ນໍ້າຂອງ ແລະ ແມ່ນໍ້າສາຂາຫຼັກຂອງມັນ. ແຕ່ວ່າ ມີພຽງແຕ່ 25 ສະຖານນີ ທີ່ໄດ້ຖືກຄັດເລືອກ ເຂົ້າໃນການສຶກສາຄັ້ງນີ້ ຍ້ອນວ່າສະຖານີອື່ນນັ້ນ ບໍ່ມີຂໍ້ມູນຄົບຖ້ວນ. 11 ສະຖານນີ ໃນຈຳນວນ 25 ສະຖານີທີ່ຕິດຕາມນັ້ນ ແມ່ນຢູ່ໃນປະເທດກຳປູເຈຍ, 4 ສະຖານີ ໃນ ສປປ ລາວ, 5 ສະຖານນີ ໃນປະເທດໄທ ແລະ ອີກ 5 ສະຖານີ ໃນປະເທດຫວຽດນາມ.

ໃນອີກດ້ານໜຶ່ງນັ້ນ, ບົດລາຍງານ SIMVA ທີ່ມີ 168 ໜ້ານັ້ນ ໄດ້ເກັບກຳຂໍ້ມູນແລະຂ່າວສານໃໝ່ໆ ເຊິ່ງໃຫ້ຮູ້ເລິກເຊິ່ງເຖິງ ສະພາບການດ້ານສັງຄົມ, ຄວາມສ່ຽງໄພ ແລະ ຊີວິດການເປັນຢູ່ຂອງ ຊຸມຊົນລຽບຕາມ ລຳແມ່ນໍ້າຂອງ. ໃນຈຳນວນສິ່ງທີ່ຄົ້ນພົບ ທີ່ພົ້ນເດັ່ນ ໃນການສຶກສາຄັ້ງນີ້ນັ້ນ ແມ່ນເຫດການນໍ້າຖ້ວມທີ່ເພີ່ມຂຶ້ນ ເຊິ່ງອາດເປັນຜົນມາຈາກ ການປ່ຽນແປງດິນຟ້າອາກາດ ແລະ ປັດໄຈອື່ນໆ ເຊິ່ງຮວມທັງ ການພັດທະນາໂຄງລ່າງພື້ນຖານທາງນໍ້າ.

ໃນໄລຍະປີ 2015-2018 ທີ່ຜ່ານມານີ້, ບ້ານທີ່ເກັບຕົວຢ່າງມາ ມີປະມານ 62% ໄດ້ປະສົບກັບການສູນເສຍ ແລະ ຄວາມເສຍຫາຍຈາກນໍ້າຖ້ວມ. ປະເທດໄທ ມີອັດຕາສ່ວນສູງສຸດເຖິງ 80%, ສ່ວນປະເທດຫວຽດນາມ ມີອັດຕາສ່ວນຕໍ່າສຸດ ຢູ່ທີ່ 42%. ບ້ານຈຳນວນ 25% ເວົ້າວ່າ ຜົນກະທົບຈາກນໍ້າຖ້ວມ ຮຸນແຮງຂຶ້ນຫຼາຍ ແລະ ບ້ານຈຳນວນ 25% ຂອງຈຳນວນບ້ານທີ່ໄດ້ລາຍງານເຖິງ ຜົນກະທົບເລົ່ານີ້ ແມ່ນໜັກໜ່ວງຫຼາຍ ໃນໄລຍະ 12 ເດືອນຜ່ານມາ ທຽບກັບປີຜ່ານໆມາ. ເມື່ອທຽບກັບການສຳຫຼວດໃນປີ 2014 ເຫັນວ່າ ການສູນເສຍ ແລະ ຄວາມເສຍຫາຍຈາກ ຜົນກະທົບຕົ້ນຕໍດ້ານສະພາບອາກາດ ໂດຍສະເພາະແມ່ນ ໄພນໍ້າຖ້ວມນັ້ນ ແມ່ນໄດ້ເພີ່ມຂຶ້ນຫຼາຍ.

ການສຳຫຼວດສຳລັບບົດລາຍງານ SIMVA ໃນປີ 2018 ນັ້ນ ແມ່ນເປັນການສຳຫຼວດຄັ້ງທີສາມ ໃນການສຳຫຼວດປະເພດນີ້ ແລະ ໄດ້ດຳເນີນຂຶ້ນ ໃນສະຖານທີ່ສຶກສາດຽວກັນ ແລະ ນຳໃຊ້ວິທີການດຽວກັນກັບ ການສຳຫຼວດສຳລັບບົດລາຍງານ SIMVA ໃນປີ 2014.

ສຳລັບສິ່ງທີ່ຄົ້ນພົບອື່ນໆນັ້ນ, ການສຳຫຼວດສຳລັບບົດລາຍງານ SIMVA ໃນປີ 2018 ໄດ້ໃຫ້ຮູ້ວ່າ ອັດຕາສ່ວນຮ້ອຍຂອງຄົວເຮືອນ ທີ່ເຮັດການປະມົງຫາປານັ້ນ ໄດ້ຫຼຸດລົງໃນທົ່ວທັງພາກພື້ນ ຈາກ 50% ໃນປີ 2014 ມາເປັນປະມານ 37% ໃນປີ 2018. ສິ່ງດັ່ງກ່າວມານີ້ ສ່ວນໜຶ່ງແມ່ນເປັນຍ້ອນ ການຫາປາໄດ້ໜ້ອຍລົງ ແລະ ອີກສ່ວນໜຶ່ງ ແມ່ນເປັນຍ້ອນມີໂອກາດອື່ນໆທາງເສດຖະກິດ ແລະ ມີຫຼາກຫຼາຍວິທີການຫາລ້ຽງຊີບ.

ຄວາມບໍ່ສະເໝີພາບລະຫວ່າງຍິງ-ຊາຍ ກໍ່ເປັນປັດໄຈສຳຄັນອັນໜຶ່ງ ທີ່ຊໍ້າຕື່ມຄວາມສ່ຽງໃນສັງຄົມ. ພາລະບົດບາດຍິງ-ຊາຍແບບດັ້ງເດີມ ຍັງມີແຜ່ຫຼາຍໃນຫຼາຍຂົງເຂດ ຕາມລະບຽງຂອງອ່າງແມ່ນໍ້າຂອງຕອນລຸ່ມ ເຊິ່ງເຫັນໄດ້ໃນ ຄວາມແຕກໂຕນກັນຫຼາຍ ໃນທາງດ້ານ ການຈ້າງແຮງງານ ແລະ ການຈ່າຍຄ່າແຮງງານ ລະຫວ່າງ ຍິງ ແລະ ຊາຍ. ຄອບຄົວທີ່ເພດຍິງເປັນຫົວໜ້າຄອບຄົວນັ້ນ ແມ່ນມີຄວາມສ່ຽງໄພເປັນພິເສດ ຍ້ອນວ່າ ພວກເຂົາຍັງເປັນ ແມ່ລ້ຽງດ່ຽວ ນຳອີກ. ການສຳຫຼວດໃນຄັ້ງນີ້ ໄດ້ພົບວ່າ ຄົວເຮືອນ 19% ແມ່ນມີຜູ້ຍິງເປັນຫົວໜ້າຄອບຄົວ ແລະ 81% ແມ່ນຜູ້ຊາຍເປັນຫົວໜ້າຄອບຄົວ. ສປປ ລາວ ແລະ ຫວຽດນາມ ມີອັດຕາສ່ວນຕໍ່າສຸດ ທີ່ຜູ້ຍິງເປັນຫົວໜ້າຄອບຄົວ ເຊິ່ງຢູ່ທີ່ 13%, ສ່ວນປະເທດໄທ ແມ່ນຢູ່ທີ 27% ເຊິ່ງເປັນອັດຕາທີ່ສູງສຸດ.

ນອກຈາກບົດລາຍງານ FDMA ແລະ ບົດລາຍງານ SIMVA ແລ້ວ, ວຽກງານຕິດຕາມອື່ນໆທີ່ສຳຄັນ ໃນທາງດ້ານເສດຖະກິດ-ສັງຄົມ ທີ່ ຄມສ ໄດ້ດຳເນີນການຜ່ານມາ ໂດຍການຮ່ວມມືກັບ ບັນດາປະເທດສະມາຊິກນັ້ນ ປະກອບດ້ວຍບົດລາຍງານສະຖານະການຂອງອ່າງແມ່ນໍ້າ ປີ 2018 (State of the Basin Report 2018) ເຊິ່ງເປັນການດຳເນີນງານ ຂະໜາດໃຫຍ່ຄັ້ງທຳອິດ ທີ່ສັງລວມເອົາ ຂໍ້ມູນເສດຖະກິດ-ສັງຄົມ ຢ່າງລະອຽດ ໃນອ່າງແມ່ນໍ້າແຫ່ງນີ້ ເຊິ່ງຮວມທັງ ອ່າງແມ່ນໍ້າຂອງຕອນເທິງ.

**-ຈົບ-**

**ຂໍ້ມູນສຳລັບບັນນາທິການຂ່າວ:**
ຄມສ ແມ່ນອົງການຈັດຕັ້ງ ລະຫວ່າງລັດຖະບານ ເພື່ອການປຶກສາຫາລື ແລະ ການຮ່ວມມືລະດັບພາກພື້ນ ໃນອ່າງແມ່ນໍ້າຂອງຕອນລຸ່ມ. ສ້າງຕັ້ງຂຶ້ນໃນປີ 1995 ຕາມສັນຍາແມ່ນໍ້າຂອງ ລະຫວ່າງ ປະເທດກຳປູເຈຍ, ສປປ ລາວ, ປະເທດໄທ ແລະ ປະເທດຫວຽດນາມ. ອົງການດັ່ງກ່າວນີ້ ເຮັດໜ້າທີ່ເປັນກົນໄກລະດັບພາກພື້ນ ເພື່ອການຮ່ວມມື ກ່ຽວກັບນໍ້າ ແລະ ທັງເປັນສູນກາງຄວາມຮູ້ ກ່ຽວກັບ ການຄຸ້ມຄອງຊັບພະຍາກອນນໍ້າ ເພື່ອການພັດທະນາຢ່າງຍືນຍົງ ໃນພາກພື້ນນີ້.

**ຖ້າຕ້ອງການຂໍ້ມູນເພີ່ມຕື່ມ, ກະລຸນາຕິດຕໍ່:**
ທ່ານ ໂສພຽກ ແມ, ພະນັກງານປະຊາສຳພັນ
ກອງເລຂາ ຄະນະກຳມາທິການແມ່ນໍ້າຂອງສາກົນ
ອີເມວ: sopheak@mrcmekong.org
ມືຖື: +856-20-77779168

###